# ມິຊຊາອາທິດທີ 11 ກຳມົດທຳມະດາປີ B
## ວັນທີ 17 ມິຖຸນາ 2018



**ພຣະວໍລະສານໂດຍນັກບຸນມັກໂກ 4, 26-36**

ໃນເວລານັ້ນພຣະເຢຊູເຈົ້າຊົງກ່າວຄວາມປຽບທຽບແກ່ຝູງຊົນວ່າ: ອານາຈັກຂອງພຣະເປັນເຈົ້າປຽບເໝືອນຄົນທີ່ຫວ່ານແນວປູກລົງໃສ່ດິນ. ເຂົາຈະນອນຫລັບຫລືຕື່ນຢູ່, ຍາມກາງເວັນຫລືຍາມກາງຄືນກໍຕາມ ແນວປູກນັ້ນກໍແຕກງອກໃຫຍ່ຂຶ້ນໂດຍເຂົາເອງບໍ່ຮູ້ວ່າມັນເປັນແນວໃດ. ມີແຕ່ດິນຢ່າງດຽວທຳໃຫ້ເກີດເປັນຕົ້ນອ່ອນ ແລ້ວອອກຮວງ. ສຸດທ້າຍ, ຮວງນັ້ນກໍເຕັມດ້ວຍເມັດເຂົ້າຕື່ງ. ເມື່ອເຂົ້າສຸກແລ້ວ, ເຂົາກໍເອົາກ່ຽວມາກ່ຽວ ຍ້ອນວ່າເຖິງຍາມກ່ຽວແລ້ວ.

ພຣະອົງຊົງກ່າວຕໍ່ໄປວ່າ: ເຮົາຈະປຽບອານາຈັກຂອງພຣະເປັນເຈົ້າໃສ່ຫຍັງ ແລະຈະເອົາຄວາມປຽບທຽບແນວໃດມາທຽບໃສ່? ເຮົາຈະປຽບໃສ່ເມັດງາ ອັນເປັນເມັດຜັກທີ່ນ້ອຍທີ່ສຸດໃນພວກເມັດພືດທີ່ເຂົາຫວ່ານລົງດິນ. ແຕ່ພໍແຕກງອກຂຶ້ນແລ້ວມັນກໍກາຍເປັນຕົ້ນໄມ້ໃຫຍ່ກວ່າຜັກທຸກຊະນິດໃນສວນ ແລະແຕກກິ່ງກ້ານອອກໄປຈົນນົກໃນອາກາດມາພັກອາໄສຢູ່ຮົ່ມຂອງມັນໄດ້.

ພຣະອົງຊົງປ່າວປະກາດພຣະວາຈາເປັນຄວາມປຽບທຽບຢ່າງນີ້ອີກຫລາຍຕາມແຕ່ປະຊາຊົນຈະເຂົ້າໃຈໄດ້. ພຣະອົງບໍ່ກ່າວຫຍັງໂດຍບໍ່ໃຊ້ຄວາມປຽບທຽບ ແຕ່ໄດ້ຊົງແປອະທິບາຍເປັນພິເສດແກ່ພວກສາວົກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ ມກ 4, 26-36**

ວັນນີ້ພຣະເຢຊູເຈົ້າກ່າວເຖິງອານາຈັກຂອງພຣະເປັນເຈົ້າໂດຍໃຊ້ຄຳສົມທຽບເລື່ອງຜູ້ຫວ່ານເພື່ອອະທິບາຍໃຫ້ຝູງຊົນທີ່ມາຟັງພຣະອົງ. ສິ່ງທີ່ໜ້າຄິດໃນທີ່ນີ້ຄືອານາຈັກສະຫວັນສຳລັບພວກເຮົາຜູ້ເປັນມະນຸດ: ເປັນບ່ອນທີ່ສຳຄັນ, ເປັນສິ່ງທີ່ຍິ່ງໃຫຍ່, ເປັນຄວາມຫວັງ, ຄວາມປາດຖະໜາຂອງມະນຸດທຸກຄົນທີ່ຈະໄດ້ເປັນກຳມະສິດ ເພື່ອຈະໄດ້ເຂົ້າຢູ່ຮ່ວມສຸກກັບພຣະເຈົ້າໃນອານາຈັກຂອງພຣະອົງ. ແຕ່ວັນນີ້, ພຣະເຢຊູເຈົ້າພັດສົມທຽບສິ່ງທີ່ຍິ່ງໃຫຍ່ແລະສຳຄັນນີ້ຄືອານາຈັກຂອງພຣະເຈົ້າກັບສິ່ງທີ່ທຳມະດາ, ຕໍ່ານ້ອຍແລະຢູ່ໃນຊີວິດປະຈຳວັນຊຶ່ງທຸກຄົນສາມາດພົບເຫັນແລະເຂົ້າໃຈໄດ້ ຄືເມັດໝາກງາ. ເປັນຫຍັງພຣະເຢຊູເຈົ້າຈຶ່ງສົມທຽບແບບນີ້? ພຣະອົງຢາກບອກສອນພວກເຮົາຫຍັງ?

ແນ່ນອນໃນຊີວິດກຣິສຕັງ, ພວກເຮົາແຕ່ລະຄົນລ້ວນແຕ່ມີຄວາມປາດຖະໜາຢາກໄດ້ເມືອງສະຫວັນ, ຢາກໄປຢູ່ຮ່ວມກັບພຣະເຈົ້າໃນອານາຈັກຂອງພຣະອົງ. ຄວາມຄິດແລະຄວາມປາດຖະໜານີ້ເຮັດໃຫ້ພວກເຮົາຊອກຫາທຸກວິທີທາງເພື່ອຈະໄດ້ສົມດັ່ງປາດຖະໜາ. ດັ່ງນັ້ນ, ພວກເຮົາຈຶ່ງອອກເຫື່ອເທແຮງແລະຊອກຫາວຽກງານທີ່ສຳຄັນ ແລະສິ່ງທີ່ຍິ່ງໃຫຍ່ເພື່ອກະທຳຍ້ອນຢາກສ້າງບຸນກຸສົນຫລາຍເພື່ອວັນໜຶ່ງພຣະເຈົ້າຈະປະທານບຳເນັດລາງວັນຄືອານາຈັກຂອງພຣະອົງໃຫ້. ສິ່ງທີ່ພໍ່ກ່າວມານີ້ລ້ວນແຕ່ເປັນສິ່ງທີ່ດີ. ແຕ່ມີສິ່ງໜຶ່ງທີ່ພວກເຮົາມັກຫລົງລືມແລະບໍ່ໃສ່ໃຈ ນັ້ນຄືໜ້າທີ່ແລະຊີວິດປະຈຳວັນຂອງພວກເຮົາ. ອາດຈະເປັນໜ້າທີ່ຂອງການເປັນພໍ່ທີ່ດີ, ເປັນແມ່ທີ່ດີ, ເປັນລູກທີ່ດີຂອງພໍ່ແມ່ ຫລືໜ້າທີ່ຂອງການເປັນພົນລະເມືອງທີ່ດີ, ເປັນພະນັກງານທີ່ດີ, ເປັນນັກສຶກສາທີ່ດີ. ສິ່ງເລັກນ້ອຍເຫລົ່ານີ້ຊຶ່ງຫລາຍຄັ້ງພວກເຮົາບໍ່ໃສ່ໃຈ, ວັນນີ້ພຣະເຢຊູເຈົ້າສອນພວກເຮົາວ່າ ພວກເຮົາສາມາດໄດ້ຮັບອານາຈັກຂອງພຣະເຈົ້າໃນສິ່ງທີ່ທຳມະດາສາມັນໃນຊີວິດປະຈຳວັນຂອງພວກເຮົາ. ພວກເຮົາສາມາດເປັນນັກບຸນໄດ້ໃນຊີວິດປະຈຳວັນຂອງພວກເຮົາ, ຖ້າພວກເຮົາປະຕິບັດຢ່າງດີທຸກສິ່ງຢ່າງທີ່ພຣະເຈົ້າມອບໃຫ້ແຕ່ລະວັນຕາມຄວາມສາມາດຂອງພວກເຮົາ.

ສິ່ງທີ່ພໍ່ກ່າວມານີ້ບໍ່ແມ່ນສິ່ງທີ່ເລື່ອນລອຍແຕ່ເປັນຄວາມຈິງຜ່ານທາງຊີວິດຂອງບັນດານັກບຸນທີ່ພວກເຮົາຮູ້ຈັກເຊັ່ນ: ນັກບຸນເທຣຊາແຫ່ງພຣະເຢຊູກຸມານ. ທ່ານນັກບຸນບໍ່ໄດ້ເຮັດສິ່ງທີ່ຍິ່ງໃຫຍ່ເລີດລ້ຳແຕ່ຢ່າງໃດ, ນອກຈາກການເປັນນັກບວດທີ່ດີໃນອາຮາມແລະໃຊ້ຊີວິດປະຈຳວັນຢ່າງດີກັບເອື້ອຍນ້ອງນັກບວດດ້ວຍກັນໃນຄຳພາວະນາແລະໃນຄວາມຮັກທີ່ມີຕໍ່ພຣະເຢຊູເຈົ້າ.

ດັ່ງນັ້ນໃນວັນນີ້ພຣະເຢຊູເຈົ້າຈຶ່ງໃຊ້ຮູບພາບຂອງເມັດໝາກງາ, ອັນເປັນສິ່ງທີ່ນ້ອຍທີ່ສຸດແລະທຳມະດາທີ່ສຸດເພື່ອສົມທຽບເຖິງສິ່ງທີ່ສຳຄັນແລະຍິ່ງໃຫຍ່ທີ່ສຸດນັ້ນຄືອານາຈັກຂອງພຣະເຈົ້າ. ສິ່ງນີ້ຊ່ວຍໃຫ້ພວກເຮົາມີຄວາມຫວັງຍິ່ງຂຶ້ນວ່າອານາຈັກຂອງພຣະເຈົ້າບໍ່ໄດ້ເປັນສິ່ງທີ່ເໜືອບ່າກວ່າແຮງຂອງພວກເຮົາ. ແລະອານາຈັກຂອງພຣະເຈົ້າບໍ່ໄດ້ຢູ່ຫ່າງໄກພວກເຮົາ. ແຕ່ອານາຈັກສະຫວັນຢູ່ໃນຕົວຂອງພວກເຮົາແລະຢູ່ໃນຄອບຄົວຂອງພວກເຮົາ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນຄວາມຫວັງແລະເປັນກຳລັງໃຈສຳລັບພວກເຮົາໃນການດຳເນີນຊີວິດຂອງການເປັນກຣິສຕັງ, ເປັນລູກຂອງພຣະເຈົ້າຢ່າງດີໃນຊີວິດຄອບຄົວປະຈຳວັນຂອງພວກເຮົາ. ເພາະຜ່ານທາງວຽກງານເລັກນ້ອຍເຫລົ່ານີ້ທີ່ຈະນຳພວກເຮົາໄປສູ່ອານາຈັກຂອງພຣະເຈົ້າ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ